# ມິຊຊາສຳລັບຜູ້ລ່ວງລັບ



**ພຣະວໍລະສານໂດຍນັກບຸນມັດເທວ 25, 1-13**

ໃນເວລານັ້ນ, ພຣະເຢຊູເຈົ້າໄດ້ເວົ້າເລື່ອງການສະເດັດມາຂອງພຣະອົງໃຫ້ພວກສາວົກຟັງວ່າ: ອານາຈັກສະຫວັນຍັງປຽບໄດ້ກັບນາງສາວສິບຄົນທີ່ຖືຕະກຽງອອກໄປຕ້ອນຮັບເຈົ້າບ່າວ.

ໃນຈຳນວນນາງສາວສິບຄົນນັ້ນ, ຫ້າຄົນເປັນຄົນໂງ່ແລະຫ້າຄົນເປັນຄົນສະຫລາດ. ພວກທີ່ໂງ່ຖືເອົາຕະກຽງຂອງຕົນໄປ ແຕ່ບໍ່ໄດ້ເອົານ້ຳມັນໄປເພື່ອໄວ້. ສ່ວນພວກສະຫລາດຫ້າຄົນຖືເອົາຕະກຽງຂອງຕົນແລະຍັງໄດ້ເອົານ້ຳມັນໃສ່ຂວດໄປດ້ວຍ. ແຕ່ຍ້ອນວ່າເຈົ້າບ່າວນານມາ, ເຂົາທັງໝົດກໍເຫງົານອນແລ້ວເລີຍພາກັນຫລັບໄປ. ພໍທ່ຽງຄືນກໍມີສຽງຮ້ອງວ່າ: ນີ້ເດ, ເຈົ້າບ່າວມາແລ້ວ ຈົ່ງອອກໄປຕ້ອນຮັບເພິ່ນເຖີດ. ເວລານັ້ນ, ນາງສາວທັງໝົດພ້ອມກັນຕື່ນນອນ ແລະຈັດແຈງໃຕ້ຕະກຽງຂອງໃຜລາວ. ພວກນາງສາວໂງ່ຈຶ່ງເວົ້າກັບພວກສະຫລາດວ່າ: ຂໍແບ່ງນ້ຳມັນໃຫ້ພວກເຮົາແດ່. ຍ້ອນວ່າຕະກຽງຂອງພວກເຮົາກຳລັງຈະມອດ.

ພວກນາງສະຫລາດຈຶ່ງຕອບວ່າ: ຢ້ານບໍ່ມີພໍສຳລັບພວກເຮົາແລະພວກເຈົ້າດອກ. ໃຫ້ພວກເຈົ້າໄປຊື້ເອົານຳພວກພໍ່ຄ້າຈະດີກວ່າ. ເວລາພວກນາງສາວໂງ່ໄປຊື້ນ້ຳມັນ ເຈົ້າບ່າວກໍມາຮອດ. ພວກນາງທີ່ຕຽມພ້ອມແລ້ວ ກໍໄດ້ເຂົ້າໃນຫ້ອງງານວິວາຫະມຸງຄຸນນຳເຈົ້າບ່າວແລ້ວກໍອັດປະຕູໄວ້.

ສຸດທ້າຍ, ພວກນາງອື່ນໆກໍມາຮອດດ້ວຍແລະຮ້ອງວ່າ: ພຣະອົງເຈົ້າເອີຍ! ພຣະອົງເຈົ້າເອີຍ! ໄຂເອົາພວກຂ້ານ້ອຍແດ່. ເຈົ້າບ່າວຈຶ່ງຕອບວ່າ: ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ເຮົາບໍ່ຮູ້ຈັກພວກເຈົ້າດອກ.

ດັ່ງນີ້, ພວກເຈົ້າຈົ່ງຕື່ນເຝົ້າເຖີດ. ຍ້ອນວ່າພວກເຈົ້າບໍ່ຮູ້ຈັກວັນ ແລະເວລາເລີຍ.

*ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ*

**ບົດແບ່ງປັນ: ມທ 25, 1-13**

ບົດພຣະວໍລະສານທີ່ພວກເຮົາຫາກໍຟັງນີ້ຫລາຍຄົນກໍຈື່ຂຶ້ນໃຈ ເພາະພວກເຮົາໄດ້ມີໂອກາດຟັງຫລາຍຄັ້ງບໍ່ວ່າຈະຢູ່ໃນມິຊຊາ ຫລືໃນເວລາຮຽນຄໍາສອນ. ເມື່ອພວກເຮົາຟັງເລື່ອງນີ້ພວກເຮົາມີຄວາມເຂົ້າໃຈແນວໃດ? ພຣະເຢຊູເຈົ້າຢາກສອນພວກເຮົາຫຍັງຜ່ານທາງຄໍາປຽບທຽບນີ້? ມີຍິງສາວສິບຄົນ: ຫ້າຄົນເປັນຄົນສະຫລາດ ແລະຫ້າຄົນເປັນຄົນໂງ່. ທັງສິບລ້ວນແຕ່ຖືກເຊີນມາງານວິວາ, ງານດອງ, ເພື່ອຕ້ອນຮັບເຈົ້າບ່າວ. ເຈົ້າສາວທັງສິບຄົນນັ້ນມີຕະກຽງຜູ້ລະອັນ. ແຕ່ມີພຽງຫ້າຄົນສະຫລາດທີ່ຖືນໍ້າມັນມາເພື່ອ. ເຈົ້າສາວທັງສິບຄົນລ້ວນແຕ່ນອນຫລັບໃນເວລາລໍຖ້າເຈົ້າບ່າວ. ເມື່ອເວລາເຈົ້າບ່າວມາ ທຸກຄົນກໍຕື່ນມາຮັບ ແຕ່ມີແຕ່ເຈົ້າສາວສະຫລາດຫ້າຄົນທີ່ມີນໍ້າມັນພຽງພໍສໍາລັບຕ້ອນຮັບເຈົ້າບ່າວ. ແລະນາງສະຫລາດທັງຫ້ານີ້ບໍ່ຍອມແບ່ງປັນນໍ້າມັນຂອງຕົນໃຫ້ກັບຄົນອື່ນ. ພວກເຮົາລອງມາຕັ້ງຄໍາຖາມເບິ່ງວ່າ: ຍິງສາວທັງສິບຄົນນີ້ແມ່ນໃຜ? ແລະເຈົ້າບ່າວແມ່ນໃຜ? ງານວິວາຫະມົງຄົນແມ່ນຫຍັງ? ເປັນຫຍັງນາງສະຫລາດທັງຫ້າຈຶ່ງບໍ່ຢາກແບ່ງນໍ້າມັນຂອງຕົນໃຫ້ຄົນອື່ນ?

ຍິງສາວທັງສິບຄົນນັ້ນແມ່ນພວກເຮົາແຕ່ລະຄົນທີ່ຢູ່ໃນທີ່ນີ້. ພວກເຮົາມີຕະກຽງຄົນລະອັນ, ຕະກຽງນີ້ແມ່ນຊີວິດທີ່ພຣະເຈົ້າໄດ້ປະທານໃຫ້ພວກເຮົາ ເພື່ອພວກເຮົາຈະໄດ້ເຮັດໃຫ້ມັນເກີດດອກອອກຜົນ. ສ່ວນນໍ້າມັນແມ່ນວຽກງານການກະທໍາຂອງພວກເຮົາແຕ່ລະຄົນ, ບໍ່ວ່າຈະເປັນບຸນ ຫລືບາບ. ເພາະສະນັ້ນພວກຍິງສາວສະຫລາດທັງຫ້າບໍ່ສາມາດແບ່ງປັນນໍ້າມັນຂອງຕົນໃຫ້ກັບຄົນອື່ນ. ພວກເຮົາສາມາດຊ່ວຍເຫລືອກັນແລະກັນດ້ວຍຄໍາພາວະນາ, ດ້ວຍການເຮັດບຸນສ່ວນກຸສົນໃຫ້. ແຕ່ພວກເຮົາບໍ່ສາມາດຮັບແທນຄົນອື່ນໄດ້ຕໍ່ໜ້າເຈົ້າບ່າວນັ້ນຄືພຣະເຢຊູເຈົ້າ. ເມື່ອເວລາພຣະອົງສະເດັດມາໃນວັນສຸດທ້າຍ, ມື້ທີ່ພວກເຮົາແຕ່ລະຄົນຈະໄປຢືນຢູ່ຕໍ່ໜ້າພຣະເຈົ້າ ແລະສິ່ງທີ່ເຮັດໃຫ້ພວກເຮົາພ້ອມທີ່ຈະຕ້ອນຮັບພຣະອົງນັ້ນຄືນໍ້າມັນທີ່ພວກເຮົາໄດ້ສະສົມໄວ້, ອັນແມ່ນຄຸນງາມຄວາມດີແລະບຸນກຸສົນຕ່າງໆໃນຊີວິດຂອງພວກເຮົາ.

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ ເຕືອນໃຈພວກເຮົາໃຫ້ຮູ້ຈັກຕຽມພ້ອມຕະກຽງແລະນໍ້າມັນຂອງຕົນເພື່ອອອກໄປຕ້ອນຮັບເຈົ້າບ່າວແບບຍິງສະຫລາດທັງຫ້າເພາະພຣະອົງມາໃນເວລາທີ່ພວກເຮົາບໍ່ຮູ້ຈັກ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ